ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------0------

LAO WORLD PUBLIC COMPANY

ບໍລິສັດ ລາວເວີ້ນ ມະຫາຊົນ

ເລກທີ: 402-/23-/ລວມຊ

ນະຄອນຫຼວງວຽງຈັນ, ວັນທີ: 05 JUN 2023.

ໜັງສືແຈ້ງການ

ຮຽນ: ຜູ້ຖືຮຸ້ນລາຍຍ່ອຍ ບໍລິສັດ ລາວເວີ້ນ ມະຫາຊົນ ທີ່ນັບຖື;
ເລື່ອງ: ຮັບຊື້ຮຸ້ນລາຍຍ່ອຍ ຂອງ ບໍລິສັດ ລາວເວີ້ນ ມະຫາຊົນ

- ອີງຕາມໜັງສືແຈ້ງຕອບ ຂອງຕະຫຼາດຫຼັກຊັບລາວ ກ່ຽວກັບຖອນທະບຽນຮຸ້ນແບບສະໝັກໃຈ ສະບັບເລກທີ 840/ຕລຊລ ລົງວັນທີ 01 ມິຖຸນາ 2023.

ຜູ້ອຳນວຍການໃຫຍ່ ບໍລິສັດ ລາວເວີ້ນ ມະຫາຊົນ (ລວມຊ) ຂໍຖືເປັນກຽດແຈ້ງມາຍັງ ຜູ້ຖືຮຸ້ນລາຍຍ່ອຍ ຂອງ ລວມຊ ຊາບວ່າ ບໍລິສັດ ທີເຄສັບພອດ ຈຳກັດຜູ້ດຽວ (ທຄສພ) ໃນຖານະເປັນຜູ້ຖືຮຸ້ນລາຍໃຫຍ່ ມີຈຸດປະສົງຂໍສະເໜີຮັບຊື້ຮຸ້ນລາຍຍ່ອຍທັງໝົດຈາກຜູ້ຖືຮຸ້ນລາຍຍ່ອຍ ເພື່ອຖອນຈົດທະບຽນຮຸ້ນຂອງບໍລິສັດ ອອກຈາກການເປັນຮຸ້ນຈົດທະບຽນໃນ ຕລຊລ ເຊິ່ງໄດ້ກຳນົດລາຍລະອຽດຂອງການຮັບຊື້ຮຸ້ນ ດັ່ງລຸ່ມນີ້:

- ລາຄາທີ່ສະເໜີຊື້ຮຸ້ນ : 9.100 ກີບຕໍ່ຮຸ້ນ
- ໄລຍະເວລາຮັບຊື້ຮຸ້ນ : ເລີ່ມແຕ່ວັນທີ 12 ມິຖຸນາ 2023 ຫາ ວັນທີ 30 ມິຖຸນາ 2023; ເວລາ 8:30 ໂມງ - 15:00 ໂມງ ໃນວັນລັດຖະການ.

ຜູ້ຖືຮຸ້ນສາມາດຕິດຕໍ່ສອບຖາມຂໍ້ມູນ ເພື່ອສັ່ງຂາຍຮຸ້ນໄດ້ກັບບໍລິສັດຫຼັກຊັບ ທີ່ທ່ານມີບັນຊີນຳ ໂດຍຕິດຕໍ່ຕາມລາຍລະອຽດດັ່ງລຸ່ມນີ້:

1. ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ
   - ທີ່ຢູ່ : ສຳນັກງານ ທະນາຄານພັດທະນາລາວ ສາຂານະຄອນຫຼວງ, ຊັ້ນ 3, ບ້ານ ມີໄຊ, ເມືອງ ຈັນທະບຸລີ, ນະຄອນຫລວງວຽງຈັນ;
   - ໂທລະສັບ : 021 224001; 021 224002; 021 224003.

Scanned with CamScanner

2. ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ

- ທີ່ຢູ່ : ຕຶກຕະຫລາດຫຼັກຊັບລາວ, ຊັ້ນ 7, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ;
- ໂທລະສັບ : 021 265484 - 5

3. ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

- ທີ່ຢູ່ : ຕຶກຕະຫລາດຫຼັກຊັບລາວ, ຊັ້ນ 6, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ;
- ໂທລະສັບ : 021 419222; 021 419210; 021 419211.

ໝາຍເຫດ: ໃນໄລຍະເວລາຮັບຊື້ດັ່ງກ່າວ ຈະບໍ່ສາມາດດຳເນີນການຊື້-ຂາຍຮຸ້ນຂອງ ລວມຊ ຜ່ານກະດານຊື້ຂາຍຂອງຕະຫຼາດຫຼັກຊັບລາວໄດ້.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຮັບຊາບ.

ຜູ້ອຳນວຍການໃຫຍ່
ບໍລິສັດ ລາວເວີ້ນ ມະຫາຊົນ

ນ. ສີພອນຄຳ ດວງດາລ

Scanned with CamScanner